# ງານວາງສະແດງສິນຄ້າ ຈີນ-ອາຊີໃຕ້ ຄັ້ງທີ 8 ຈະຈັດຂຶ້ນຢູ່ນະຄອນຄຸນໝິງ ລະຫວ່າງ ວັນທີ 23 - 28 ກໍລະກົດ

ງານວາງສະແດງສິນຄ້າຄັ້ງນີ້ ມີຫຼາຍຈຸດເດັ່ນ ຄື: ຈະຈັດແບ່ງ ຫໍວາງສະແດງວິຊາການຕາມປະເພດສິນຄ້າເປັນຄັ້ງທຳອິດ ແລະ ຈັດຕັ້ງເຂດບໍລິການສັງລວມການຄ້າເປັນຄັ້ງທຳອິດ ເພື່ອຍົກຄຸນນະພາບ ແລະ ປະສິດທິພາບຂອງງານວາງສະແດງ; ຈະຈັດງານວາງສະແດງສິນຄ້າທາງອອນລາຍ ແລະ ອັອຟລາຍ ໄປພ້ອມກັນ, ທາງອັອຟລາຍ ຈັດຕັ້ງຫໍວາງສະແດງ 15 ແຫ່ງ ແລະ ມີເນື້ອທີ່ວາງສະແດງ 150.000 ຕາແມັດ; ຈະຈັດຕັ້ງງານວາງສະແດງສິນຄ້າ ຈີນ-ອາຊີໃຕ້ ທາງອອນລາຍ ເພື່ອວາງສະແດງສິນຄ້າ, ໄລສົດທາງອອນລາຍ ແລະ ພົບປະສັງສັນທາງອອນລາຍ.

ແຂວງຢຸນນານ ຂໍເຊື້ອເຊີນເພື່ອນມິດທົ່ວໂລກ ມາເຂົ້າຮ່ວມງານວາງສະແດງ ແລະ ຮ່ວມກັນຄົ້ນຫາໂອກາດທຸລະກິດ ພ້ອມທັງສຳຜັດກັບ "ວິຖີຊີວິດແບບຢຸນນານ".

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ



## ກ້າວເຂົ້າສູ່ແຂວງຢຸນນານ



ໃນລະດູຮ້ອນປີນີ້, ມີຊາວໜຸ່ມຫຼາຍຄົນ ທີ່ມາຈາກບັນດາປະເທດ ຕາມລ້ອງແມ່ນ້ຳຂອງ ໄດ້ເດີນທາງມາເຖິງ ຮ່ອນໄດໂນເສົາລູເຟິງ ກິ່ງແຂວງປົກຄອງຕົນເອງ ເຜົ່າຍີ ສູສົງ (Chu xiong) ແຂວງຢຸນນານ ເພື່ອເລີ່ມການທ່ອງທ່ຽວອັດສະຈັນທີ່ຄົ້ນພົບ ສະໄໝດຶກດຳບັນ ແລະ ສະໄໝປັດຈຸບັນ.

"ສະບາຍດີ! ຍິນດີຕ້ອນຮັບທ່ານເຂົ້າສູ່ໂລກໄດໂນເສົາ." ທ້າວ ວາງເວີຍ ທີ່ມາຈາກມຽນມາ ໄດ້ສົນທະນາກັບຕຸກກະຕາໄດໂນເສົາ ທີ່ສາມາດເວົ້າໄດ້ແບບມ່ວນໆ. ລາວກ່າວວ່າ: ຕົນໄດ້ເຫັນ ຟອດຊິວໄດໂນເສົາເປັນຄັ້ງທຳອິດ, ຮູ້ສຶກວ່າສະເທືອນໃຈທີ່ສຸດ.

ທ້າວ ວາງເວີຍ ໄດ້ເຂົ້າຮ່ວມຄ້າຍຖ່າຍທຳວິດີໂອສັ້ນຊາວໜຸ່ມ ເຊິ່ງເປັນໜຶ່ງໃນກິດຈະກຳໃນສັບປະດາພາບ ແລະ ສຽງ ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຄັ້ງທີ 5 ທີ່ຈັດຂຶ້ນຢູ່ແຂວງຢຸນນານ ໃນຫວ່າງມໍ່ໆມານີ້, ງານສັບປະດາພາບ ແລະ ສຽງ ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຄັ້ງນີ້ ເນັ້ນໃສ່ຫົວຂໍ້ "ຖ່າຍທຳທິວທັດພູຜາແມ່ນ້ຳທີ່ສວຍງາມ" ໂດຍມີຜູ້ຕາງໜ້າ 400 ກວ່າຄົນ ຈາກພາກສ່ວນວິທະຍຸໂທລະພາບ ແລະ ອົງການສື່ມວນຊົນທາງການ ຂອງບັນດາປະເທດ ຕາມລ້ອງແມ່ນ້ຳຂອງ ແລະ ອາຊີໃຕ້ເຂົ້າຮ່ວມ.

ທ້າວ ວາງເວີຍ ແລະ ຊາວໜຸ່ມທັງຫຼາຍ ໄດ້ເດີນທາງໄປເຖິງແຫຼ່ງທ່ອງທ່ຽວຜູເຈີເຮີຍ ຂອງກິ່ງແຂວງປົກຄອງຕົນເອງເຜົ່າຈ້ວງ - ເຜົ່າມົ້ງ ເວີນຊານ, ນ້ຳໜອງທີ່ໃສເຢັນ ເຮັດໃຫ້ພວກເຂົາເຈົ້າຮູ້ສຶກສະຫວາດສະເຫວີຍທີ່ສຸດ.

ຢູ່ສວນດອກກຸຫຼາບຜູເຈີເຮີຍ (Puzhehei) ທີ່ເຕັມໄປດ້ວຍບັນຍາກາດໂລແມນຕິກ, ນາງ ອູສຸຍຊຽນ ທີ່ມາຈາກຫວຽດນາມ ໄດ້ນຸ່ງຊຸດໂອໄຕ ທີ່ສວຍສົດງົດງາມ ໄດ້ຍ່າງເຂົ້າສວນດອກກຸຫຼາບແດງ, ງາມປານນາງຟ້າ.

ນາງ ອູສຸຍຊຽນ ຮຽນຢູ່ມະຫາວິທະຍາໄລຊົນເຜົ່າຢຸນນານ ແລະ ນາງ ມັກດອກໄມ້ສົດຂອງແຂວງຢຸນນານເປັນພິເສດ. ຍ້ອນແນວນີ້, ເຮັດໃຫ້ນາງ ຮູ້ຈັກກັບໝູ່ເພື່ອນທີ່ດີຢູ່ຕະຫຼາດດອກໄມ້ໂຕໜານນະຄອນຄຸນໝິງ, ນັ້ນກໍຄື ນ້ອງສາວໜຸ່ມຜູ້ໜຶ່ງທີ່ມາຈາກຫວຽດນາມຄືກັນ ແລະ ເຮັດການຄ້າຂາເຂົ້າ-ຂາອອກດອກໄມ້ສົດຢູ່ຕະຫຼາດດອກໄມ້ໂຕໜານ.

ໃນຂະນະດຽວກັນ, ຜູ້ຕາງໜ້າທີ່ມາຈາກພາກສ່ວນຖະແຫຼງຂ່າວ ແລະ ອົງການສື່ມວນຊົນບັນດາປະເທດແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ກໍໄດ້ສຳຜັດກັບ "ປະເທດຈີນທີ່ສວຍງາມທີ່ສຸດ - ວິຖີຊີວິດແບບຢຸນນານ" ຢູ່ນະຄອນຄຸນໝິງ ແລະ ນະຄອນຢູ້ຊີແຂວງຢຸນນານ. ທ່ານ ຊາມິນ ອັບດຸນລາ ຈາເຣີດີ ຮອງບັນນາທິການໃຫຍ່ ໂທລະພາບອິດສະຫຼະບັງກລາເດັດ ໄດ້ເດີນທາງມາເຖິງແຂວງຢຸນນານ ເປັນຄັ້ງທຳອິດ, ທ່ານກ່າວວ່າ: ຫໍພິພິທະພັນທຳມະຊາດຟອດຊິວເສິງຈ່ຽງ ເຮັດໃຫ້ຄົນທັງຫຼາຍຮູ້ສຶກປະທັບໃຈຫຼາຍ, ຫວັງວ່າ: ສາມາດດຳເນີນການຮ່ວມມືກັບສື່ມວນຊົນແຂວງຢຸນນານ ໃນການຖ່າຍທຳຟິມສາລະຄະດີທຳມະຊາດ ແລະ ພູມສາດ ພ້ອມທັງຮ່ວມກັນຄົ້ນຄວ້າ ແລະ ບັນທຶກທິວທັດທຳມະຊາດ, ຄວາມຫຼາກຫຼາຍດ້ານລະບົບນິເວດ.

ໃນການທັດສະນະສຶກສາຄັ້ງນີ້, ອຸດສາຫະກຳທີ່ມີເອກະລັກພິເສດຂອງແຂວງຢຸນນານ ເຊັ່ນ: ດອກໄມ້ສົດ, ແພດແຜນຊີວະຊາດ ແລະ ການແປພາສາດ້ວຍປັນຍາປະດິດ ເປັນຕົ້ນ ພ້ອມທັງໝາກຜົນດ້ານການອະນຸລັກລະບົບນິເວດ ແລະ ໂສມໜ້າໃໝ່ ໃນການສ້າງຄວາມຈະເລີນຢູ່ຊົນນະບົດເປັນຕົ້ນ ລ້ວນແຕ່ໄດ້ສ້າງພາບປະທັບໃຈອັນເລິກເຊິ່ງໃຫ້ແກ່ເພື່ອນມິດປະເທດຕ່າງໆ, ພວກເຂົາເຈົ້າກໍໄດ້ສຳຜັດກັບ "ວິຖີຊີວິດແບບຢຸນນານ" ໂດຍກົງທີ່ສຸດ.

ບົດ/ພາບໂດຍ: ໜັງສືພິມລາຍວັນຢຸນນານ












**ເນື້ອໃນເພີ່ມເຕີມ:**

ນັບແຕ່ວັນທີ 17 ຫາ 22 ມິຖຸນາຜ່ານມານີ້, ງານສັບປະດາພາບ ແລະ ສຽງ ແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຄັ້ງທີ 5 ໄດ້ຈັດຂຶ້ນຢູ່ແຂວງຢຸນນານ. ສັບປະດາຄັ້ງນີ້ ໄດ້ຈັດກິດຈະກຳສາຍ ລາຍການພາບ ແລະ ສຽງດີເດັ່ນ, ຄ້າຍຖ່າຍທຳວິດີໂອສັ້ນຊາວໜຸ່ມຄັ້ງທີ 3, ການແລກປ່ຽນ ແລະ ສົນທະນາກ່ຽວກັບພາບ ແລະ ສຽງ, ການທັດສະນະສຶກສາ "ປະເທດຈີນທີ່ສວຍງາມທີ່ສຸດ-ວິຖີຊີວິດແບບຢຸນນານ", ກິດຈະກຳສາຍລະຄອນໂທລະພາບທີ່ດີເດັ່ນຂອງຈີນຢູ່ຫວຽດນາມ ແລະ ກິດຈະກຳອື່ນໆ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ

## ຈີນ ແລະ ລາວ ຮ່ວມກັນປ້ອງກັນ "ສາຍແອວສີຂຽວ"

ວັນທີ 21 ມິຖຸນາຜ່ານມານີ້, ຢູ່ເມືອງຫຼ້າ ກິ່ງແຂວງປົກຄອງຕົນເອງເຜົ່າລື້ ສິບສອງພັນນາ ຕາມເຂດຊາຍແດນລາວ-ຈີນ, ທ່ານ ຢາງຢົງຜິງ (Yang Yongping) ຫົວໜ້າສວນພຶດສາສາດເຂດຮ້ອນສິບສອງພັນນາ ສະພາບັນດິດວິທະຍາສາດຈີນ ໄດ້ເລົ່າປະຫວັດສາດທີ່ຈີນຄົ້ນພົບປ່າຝົນເຂດຮ້ອນ, ຄວາມສຳຄັນຂອງປ່າຝົນເຂດຮ້ອນ ແລະ ເລື່ອງລາວກ່ຽວກັບສອງປະເທດຈີນ ແລະ ລາວ ຮ່ວມກັນປ້ອງກັນປ່າຝົນເຂດຮ້ອນ ທີ່ເປັນ "ສາຍແອວສີຂຽວ" ຂອງມວນມະນຸດ.

ທ່ານ ຢາງຢົງຜິງ ກ່າວວ່າ: ປີ 1974, ຕົ້ນຢາງຖືກຄົ້ນພົບຢູ່ເມືອງຫຼ້າ ແຂວງຢຸນນານ, ການຄົ້ນພົບຕົ້ນໄມ້ຊະນິດນີ້ ທີ່ມີຄວາມສູງເຖິງຫຼາຍສິບແມັດ ໄດ້ສິ້ນສຸດຖ້ອຍຄຳທີ່ວ່າ "ຈີນບໍ່ມີປ່າຝົນເຂດຮ້ອນ" ແລະ ກໍເຮັດໃຫ້ຈີນ ກາຍເປັນປະເທດທີ່ມີປະເພດປ່າໄມ້ທີ່ຄົບຖ້ວນທີ່ສຸດໃນໂລກ.

ປ່າຝົນເຂດຮ້ອນ ເປັນລະບົບນິເວດ ທີ່ມີຊີວະນາໆພັນຫຼາກຫຼາຍທີ່ສຸດ, ສາມາດດູດຊຶມເອົາກາກບອນໄດ້ຢ່າງຫຼວງຫຼາຍ ແລະ ສະໜອງອົກຊີໃຫ້ແກ່ໜ່ວຍໂລກ, ເປັນແຫຼ່ງນ້ຳທີ່ດີ, ບົວລະບັດມົນລະພິດໄດ້ດີ, ຮັກສາດິນ ແລະ ນ້ຳໄດ້ດີ ເຊິ່ງມີບົດບາດສຳຄັນທີ່ສຸດຕໍ່ລະບົບນິເວດທົ່ວໂລກ.

ຈີນ ແລະ ລາວ ມີສາຍພູ ແລະ ແມ່ນ້ຳຕິດຈອດກັນ, ກິ່ງແຂວງສິບສັງພັນນາແຂວງຢຸນນານ ແລະ ປະເທດລາວ ລ້ວນແຕ່ຕັ້ງຢູ່ເຂດຈຸດສຸມດ້ານຊີວະນາໆພັນທົ່ວໂລກ ແລະ ມີຊັບພະຍາກອນສັດ ແລະ ພືດທີ່ມີເອກະລັກພິເສດ.

ທ່ານ ຢາງຢົງຜິງ ກ່າວວ່າ: "ສອງປະເທດຈີນ ແລະ ລາວ ມີປະຫວັດການໄປມາຫາສູ່ດ້ານວັດທະນະທຳມາແຕ່ບູຮານນະການ, ໃນນັ້ນ ກໍມີການແລກປ່ຽນກ່ຽວກັບພຶກສາສາດ." ຍົກຕົວຢ່າງ: ດອກຈຳປາ ເປັນດອກໄມ້ປະຈຳຊາດຂອງລາວ, ຢູ່ໃນສວນພຶດສາສາດເຂດຮ້ອນສິບສອງພັນນາ ສະພາບັນດິດວິທະຍາສາດຈີນ ກໍມີສວນດອກຈຳປາສະເພາະ, ໃນນັ້ນ, ມີດອກຈຳປາທ້ອງຖິ່ນຫຼາກຫຼາຍຊະນິດ ແລະ ກໍມີຫຼາຍຊະນິດທີ່ນຳເຂົ້າຈາກປະເທດອື່ນ.

ໃນຊຸມປີຜ່ານມາ, ສວນພຶດສາສາດເຂດຮ້ອນສິບສອງພັນນາ ໄດ້ຮັກສາການຮ່ວມມືຢ່າງແໜ້ນແຟ້ນກັບກະຊວງກະສິກຳ ແລະ ປ່າໄມ້ແຫ່ງ ສປປ ລາວ ແລະ ພາກສ່ວນຄົ້ນຄວ້າວິທະຍາສາດອື່ນໆ, ຮ່ວມກັນສຸມໃສ່ການສຳຫຼວດ ແລະ ປ້ອງກັນຊີວະນາໆພັນເຂດພາກເໜືອລາວ. ທ່ານ ຢາງຢົງຜິງ ຫວັງວ່າ: ຈະສາມາດເພີ່ມທະວີການຮ່ວມມືໃນຂົງເຂດດັ່ງກ່າວ ຢ່າງແໜ້ນແຟ້ນໃນອະນາຄົດ, ຮ່ວມກັນປ້ອງກັນປ່າຝົນເຂດຮ້ອນ, ປ້ອງກັນຄວາມສວຍງາມ ແລະ ປ້ອງກັນຊີວະນາໆພັນ.

ບົດ/ພາບໂດຍ: App ໜັງສືພິມລາຍວັນຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

